Salle Municipale – 5 rue Dumas – 93800 Epinay-sur-Seine
(200 m du Centre Commercial E. Leclerc)

## ຈັດຕາມ ຣາຍການ ປະຊຸມ ດັ່ງນີ້ :

໑- ບໍລິສາທາລີ ສົນທະນາ ສ້າງສັນ ໃນຮູບ "ອ້ອມໂຕະມົນ" ຮ່ວມກັນແບບ "ອ້າຍຮູ້ສອງນ້ອງຮູ້ນຶ່ງ" ເພື່ອຊອກຫາຄວາມເຂົ້າໃຈ ໃນຈຸດປະສົງສ້າງຄວາມເປັນເອກພາບ ໃນແນວຄິດ ກ່ຽວກັບ ບັນຫາ ແລະ ອະນາຄົດ ຂອງ ປະເທດຊາດ ອັນແສນຮັກ ຂອງພວກເຮົາ,

໒- ຊອກຫາ ເງື່ອນໄຂ, ວິທີການ ແລະ ການຮ່ວມມືກັນ ເພື່ອແກ້ໄຂບັນຫາຂອງລາວ ດ້ວຍເຫດຜົນ ເພື່ອສ່ວນຮວມໃນລັກສນະຊາດ.

## ໂຄຣົບ ແລະ ຂອບໃຈ

ຮຽນທ່ານ ດຣ. ສົມບູນ ທໍຣະນົມ,
ຮຽນທ່ານ Commandant ພູວົງ ຊະນະນິກອນ,
ຮຽນທ່ານ ຄນະກັມການທຸກທ່ານ,
ຮຽນທ່ານ ຜູ້ມີກຽດທຸກທ່ານ ທີ່ເຂົ້າມາຮ່ວມກອງປະຊຸມ ໃນມື້ນີ້, ຯລຯ.

## ອະທິບາຍ ຣາຍການ ປະຊຸມ

ສລຸບຄວາມເຂົ້າໃຈສ່ວນຕົວ ກ່ຽວກັບ ຣາຍການປະຊຸມ ດັ່ງນີ້ :

- ສົນທະນາ ເພື່ອ ແລກປ່ຽນ ຄວາມເຂົ້າໃຈ (redondant) ດ້ານການສ້າງ ເອກພາບ ໃນແນວຄິດ ອັນທີ່ຈະຖືກນຳໄປເປັນພື້ນຖານ ກ່ຽວກັບການແກ້ໄຂ ບັນຫາ ລາວ ດ້ວຍປັນຍາ.
- ສົນທະນາ ເພື່ອ ອອກແບບ ຮ່ວມກັນ ສ້າງ ເອກພາບໃນແນວຄິດ ອັນທີ່ຈະຖືກນຳໄປເປັນພື້ນຖານ ກ່ຽວກັບ ການແກ້ໄຂ ບັນຫາ ລາວ ດ້ວຍປັນຍາ.
- ສົນທະນາ ເພື່ອຊອກຫາ ຈຸດ/ການສ້າງ ເອກພາບໃນແນວຄິດ ອັນທີ່ຈະຖືກ ນຳໄປເປັນ ພື້ນຖານ ກ່ຽວກັບ ການແກ້ໄຂ ບັນຫາ ລ າ ວ ດ້ວຍປັນຍາ.

ຂໍ້ສາມນີ້ ເຫມາະສົມກວ່າ ເພາະວ່າ ຫລາຍຢ່າງ ບັນຈຸຢູ່ໃນຄຳສັບເຫລົ່ານີ້ແລ້ວ.

# ຄຳປາໄສ

ຈະເຂົ້າໃຈຢ່າງໃດກໍຕາມ ຄວາມຄິດອັນສຳຄັນໆ ໄດ້ປະກົດອອກຢູ່ໃນຣາຍການປະຊຸມ ເຊັ່ນນີ້.

ຄຳສັບ ທີ່ເປັນ ກຸນແຈ

| | |
|---|---|
| ໑໐- ຄວາມເຂົ້າໃຈ | ໓໐- ບັນຫາ (ປະເທດ-ຊາດ) |
| ໒໐- ແນວຄິດ | ໔໐- ອະນາຄົດ (ປະເທດ-ຊາດ) |
| ໒໑- ເອກພາບໃນແນວຄິດ | ໕໐- ເງື່ອນໄຂ |
| ໒໒- ແນວຄິດເອກພາບ | ໖໐- ວິທີການ |
| | ໗໐- ການຮ່ວມມື |

ເພື່ອໃຫ້ສອດຄ່ອງກັບຣາຍການປະຊຸມ, ຂພຈ ຈະກ່າວຕາມຄຳສັບທີ່ເປັນກຸນແຈ ຂ້າງເທິງນີ້. ເງື່ອນໄຂ, ວິທີການ ແລະ ການຮ່ວມມື ເປັນສາມຂໍ້ ແຫ່ງພື້ນຖານ ການດຳເນີນງານ. ສ່ວນ ຂໍ້ອື່ນໆແລ້ວ ເປັນພຽງແຕ່ການຂຍາຍຄວາມຄິດເທົ່ານັ້ນ.

## ໑໐- ຄວາມເຂົ້າໃຈ

ມີຄວາມເຂົ້າໃຈ ບໍ່ຫມາຍເຖິງມີ ແນວຄິດ. ຖ້າແນວຄິດມີ, ຄວາມເຂົ້າໃຈ ຕ້ອງມີ. ທຸກສິ່ງທຸກຢ່າງ ອັນສຳຄັນໆສຳເຣັດຮູບຂຶ້ນມາໄດ້ຕ້ອງອາໄສຄວາມເຂົ້າໃຈອັນແທ້ຈິງ, ອັນເລິກ, ອັນຫນັກແຫນ້ນ ແລະ ຄວາມບາກບັ່ນ ເປັນຫລັກ. ການກະທຳຕ່າງໆ ຈິ່ງຈະມີນ້ຳຫນັກ.

ຄວາມເຂົ້າໃຈດັ່ງກ່າວສາມາດເກີດຂຶ້ນມາໄດ້ຈາກຫລາຍຮູບແບບ. ການປຶກສາກັນໃນວັນນີ້ ກໍເປັນຮູບແບບນຶ່ງເຫມືອນກັນ ກ່ຽວກັບການສ້າງຄວາມເຂົ້າໃຈ. ໂດຍເນັ້ນຫນັກເຖິງ ຈຸດປະສົງຢາກເຮັດຢາກທຳ ເພື່ອຢາກໃຫ້ມັນມີ - ເພື່ອຢາກໃຫ້ ມັນເປັນໄປ - ເພື່ອຢາກໃຫ້ຊາດຈະເຣີນ - ເພື່ອຢາກໃຫ້ ລາວສາມັກຄີລາວ - ຢາກໃຫ້ຄົນລາວເທົ່ານັ້ນເປັນໃຫຍ່ ໃນປະເທດລາວ ແລະ ບໍ່ຢາກໃຫ້ຄົນທີ່ບໍ່ເປັນລາວມາເປັນໃຫຍ່ ໃນລາວ-ມາເປັນນາຍລາວ (ມາຄຸມລາວ-ມາປົກຄອງລາວ).

ມີຄວາມເຂົ້າໃຈຫລາຍຍ່ອມມອງເຫັນບັນຫາໄດ້ດີ ໄດ້ໄວ. ມອງເຫັນວ່າບັນຫາອັນໃດຈະເປັນໄພແກ່ຕົນຫລືແກ່ເພື່ອນຮ່ວມຊາດ. ນັ້ນກໍຄືການມອງເຫັນ ວ່າ ບັນຫາອັນໃດ ທີ່ຈະເປັນ ໄພໄຫມ້ດັບຊາດ, ດັບຄົນ ລ າ ວ ແລະ ດັບຄວາມເປັນລາວ.

## ໑໐- ແນວຄິດ

ມີແນວຄິດ ຕ້ອງມີ ຄວາມເຂົ້າໃຈ ເພາະມັນເປັນສິ່ງທີ່ປັ້ນຮູບຂຶ້ນມາໄດ້ ໂດຍອາໄສ ປັນຍາ. ຂພຈ ແບ່ງແນວຄິດອອກເປັນສອງພາກສ່ວນເຊັ່ນ: ເອກພາບໃນແນວຄິດ ແລະ ແນວຄິດເອກພາບ.

### ເອກພາບໃນແນວຄິດ

ແມ່ນຜູ້ທີ່ ມາຈາກຫລາຍຫົນແຫ່ງ ແລະ ການຈັດຕັ້ງ ຄືຜູ້ເຂົ້າປະກອບສ່ວນໃນມື້ນີ້ ເພື່ອມາ ຕົກລົງ ປົງໃຈກັນ ຊອກຫາ ຊ່ອງທາງ ຕາມຄວາມສາມາດແລະຄວາມເຂົ້າໃຈ ຂອງ ໃຜລາວ ໃຫ້ເຂົ້າຢູ່ໃນຈຸດຫມາຍອັນດຽວກັນ. ທັງນີ້ ກໍເພື່ອປົກປ້ອງ ແລະ ຫວັງຜົນປໂຍດ ສ່ວນຣວມ ໃນປັດຈຸບັນແລະໃນອະນາຄົດ.

### ແນວຄິດເອກພາບ

ຂຶ້ນຢູ່ກັບ personnalité ຂອງແຕ່ລະຄົນແລະຂຶ້ນຢູ່ກັບການສຶກສາ, ການຄົ້ນຄວ້າ, ການໂອບໂລມ ກ່ຽວກັບນິໄສໃຈຄໍ, ຄວາມເຂົ້າໃຈແລະຄວາມກ້າຫານ ເປັນຕົ້ນ. ແນວຄິດ ເອກພາບ ແມ່ນ ນິໄສໃຈຄໍຂອງຄົນທີ່ມີ ຄວາມສາມາດ, ຄວາມກ້າຫານ ແລະສະຕິຊາດ. ໃນເມື່ອ ປະເທດ-ຊາດ ຫລື ຄົນລາວ ຕົກຢູ່ໃນ ຄວາມອັນຕະຣາຍ ຜູ້ກ່ຽວຈະຊອກຫາ ວິທີ ປ້ອງກັນ ໃຫ້ທັນກັບເວລາ ຢ່າງບໍ່ມີການຂໍຮ້ອງ ຈາກຜູ້ອື່ນໆ ແຕ່ຢ່າງໃດ.

ແນວຄິດເອກພາບ ແມ່ນ ຄວາມຄິດ ອັນມີຕິດຢູ່ໃນຕົວ ຂອງປະຕິບຸກຄະລິຄົນ ທີ່ ປົກປ້ອງຜົນປໂຍດສ່ວນຣວມໂດຍບໍ່ຄິດຄ່າຫາກໍາໄຣ. ການກະທໍາດັ່ງກ່າວ ຈະຜາກົດອອກມາ ທັນການ ໃນເມື່ອເຫັນ ຄົນລາວ ດ້ວຍກັນ ຖືກບຽດບຽນ.

ເອກພາບໃນແນວຄິດ ແມ່ນ ການພ້ອມພຽງຮຽງຫນ້າກັນ ໃນດ້ານຄວາມຄິດ ເພື່ອ ຕົກລົງ ປົງໃຈ ເຮັດແນວໃດແນວນຶ່ງຮ່ວມກັນ (ມີການຊັກຊວນ).

## ໑໑- ບັນຫາ

ມີຫລາຍໂພດ.ສ່ວນບັນຫາກ່ຽວກັບລາວແລ້ວແມ່ນບັນຫາອັນທີ່ຈະພາໃຫ້ຊາດດັບ ໄດ້. ຍ້ອນວ່າ ຄົນເຮົາມັກມົວເມົາແຕ່ກິນກັນເອງ, "ຈອບມອງປະຫັດປະຫານ" ຣະຫວ່າງ

ລາວດ້ວຍກັນ, ຈົນຕົນເອງບໍ່ມີໂອກາດເງີຍຫົວຂຶ້ນແນມເບິ່ງ ຄົນຕ່າງດ້າວ ທ້າວຕ່າງແດນ ທີ່ນັ່ງຢູ່ທາງຂ້າງຂອງຕົນນັ້ນກຳລັງເຮັດຫຍັງ ໃຫ້ແກ່ເພື່ອນຮ່ວມຊາດດ້ວຍກັນ ຫລືວ່າເຂົາກຳລັງຈັດຕັ້ງກັນກະກຽມກົນກິນລາວ ກະບໍ່ຮູ້. ປາຄ້າງໂກກ. ບໍ່ຮູ້ສຶກວ່າ ນ້ຳບົກລົງຍາມໃດຊ້ຳ, ດ້ວຍເຫດໃດ ?

ບັນຫາ ປະເທດ-ຊາດ ມີໄດ້ ກໍເນື່ອງມາຈາກຄົນໃນຊາດ ຂາດຄວາມເຂົ້າໃຈ. ຄົນໃນຊາດ ຂາດຄວາມເຂົ້າໃຈ ກໍຍ້ອນຄົນໃນຊາດ ຂາດການສຶກສາ. ຜິວ່າ ຄົນໃນຊາດ ຂາດການສຶກສາ ຈະຫາເອົາອັນໃດ ມາຊື້ຈ້າງ ເພື່ອສ້າງຄວາມສາມັກຄີ ກໍເປັນໄປໄດ້ຍາກ. ຖ້າຄົນໃນຊາດ ຂາດຄວາມສາມັກຄີ, ມີຫລາຍຢ່າງ ທີ່ ຂພຈ ປ່ອຍໃຫ້ ທ່ານ ຄາດຄະເນເອົາເອງ ເຊັ່ນ :

- ປະເທດ ແລະ ຊາດ ຈະຕົກໄປຢູ່ໃນສະພາບໃດ, ບໍ່ກ່າວເຖິງຮອດເສດຖະກິດຊ້ຳ?
- ການປົກຄອງ ຂອງຣັຖບານຈະຂຶ້ນຢູ່ກັບໃຜ ຫລືວ່າ ພາຍໃຕ້ ອັນໃດ?
- ຈຳນວນຄົນລາວມີຫນ້ອຍຢູ່ແລ້ວ ແລະ ຣະດັບຄວາມຮູ້ ຂອງຄົນລາວ ກໍມີຫນ້ອຍເຫມືອນກັນ. ຖ້າຫາກວ່າ ຄົນແກວ ຄົນເຈັກ ຫຼາຍກວ່າ ຄົນລາວ ໃນປະເທດລາວປັດຈຸບັນ, ອະນາຄົດຂອງຄົນລາວ ຈະຕົກໄປຢູ່ໃນສະພາບໃດ; ຊາດລາວ ຈະຕົກຢູ່ໃນກຳມື ຂອງກຸ່ມຊົນພວກໃດແລະຄວາມຫມັ້ນຄົງ ຂອງຊາດເດ?
- ຯລຯ.

## ນີ້ຄືບັນຫາໂດຍສັງເຂບ :

- ເປັນເຈົ້າເປັນຈອມ, ເປັນຜູ້ນຳລາວຄັ້ງນີ້ຫລືຄັ້ງກ່ອນ, ບໍ່ເຄີຍສົນໃຈນຳ ເຂດນ້ຳດິນແດນຂອງປະເທດລາວ ຫລືຂອງ ອານາຈັກລາວ ວ່າກວ້າງຂວາງຂນາດໃດ ແລະບໍ່ໄຄ່ສົນໃຈນຳຮີດຄອງປະເພນີ ຂອງຕົນເອງ. ນີ້ຄືບັນຫາ.
- ເປັນເຈົ້າເປັນຈອມ, ເປັນຜູ້ນຳປະເທດຄັ້ງກ່ອນ (ຄັ້ງນີ້ ເຂົາປັນດິນໃຫ້ ວຽດນາມ), ເປັນຜູ້ນຳການຈັດຕັ້ງ ແລະ ເປັນເຈົ້າຂອງປະເທດ ບໍ່ເຄີຍທັກທວງ ຫລື ຮຽກຮ້ອງເອົາດິນດອນຕອນຫຍ້າທີ່ເສັຽໄປກັບຄືນ (revendication) ແລະບໍ່ເຄີຍເຮັດ objection ທາງກົດຫມາຍ ຫລື ທາງການເມືອງ ຈັກເທື່ອ.
- ຄົນລາວຜູ້ທີ່ບໍ່ມັກເຈົ້າມັກຈອມ, ໃນເມື່ອເຫັນເຈົ້າຟ້າລູກພຣະມະຫາກະສັດຜ່ານໄປ ເພິ່ນກໍປິ່ນຫນ້າໄປທາງອື່ນໂລດ. ຄົນໄທ, ໃນເມື່ອເຫັນ ເຈົ້າຫມ່ອມຂອງເຂົາກາຍໄປ,

ຈະພາກັນນັ່ງລົງຄາທີ່ ເພື່ອສະແດງ ຄວາມໂຄຣົບ ແລະ ຄວາມນັບຖື; ເຖິງແມ່ນວ່າ ພວກເຂົາຈະນັບຖື ພຸທສາສນາ ຫຼື ກຣິຕສາສນາ ຫລືວ່າຈະນິຍົມຊ້າຍ ຫລື ຈະນິຍົມ ຂວາ ກໍຕາມ. ຂາດວິທີການໃຫ້ກຽດແກ່ ລາວ ເຮົາເອງ, ຂາດ ຄວາມຄິດເອກພາບ.

- ຜູ້ອະວຸໂສ, ຜູ້ຕ່າງຫນ້າການຈັດຕັ້ງມາປະຊຸມ ບໍ່ອອກສຽງ. ອັນນີ້ເປັນການດູຖູກດູໝິ່ນ ຄົນລາວລຸ້ນນ້ອຍແລະດູຖູກຄຸນສົມບັດຕົນເອງ. ນີ້ກໍຄືເປັນການດູຖູກຕົນເອງເໝືອນ ກັນ.
- ຄົນລາວມັກດູຖູກແລະຖະເລາະວິວາດກັບຄົນລາວ ແຕ່ຫວນກັບໄປເອາະເຊາະກັບຄົນ ທີ່ບໍ່ເປັນລາວ. ໄວປາກເສັຽສິນໄວຕົນຕົກກົກໄມ້, ແທນທີ່ຈະໃຊ້ເວລາສັງເກດ ເພື່ອພິສູດ ຄໍາທີ່ໄດ້ຍິນ.
- ຄົນລາວທີ່ບໍ່ມານົບເຈົ້າຫມູນຊຸມນາງ ກໍຖືກຕູ່ວ່າເປັນ ແນວລາວ.
- ລາວຂາວ ລົມກັບ ລາວແດງ. ລາວຂາວ ຖືກຕູ່ວ່າ ເປັນ ແນວລາວ. ແຕ່ບາງຄັ້ງ ຜູ່ຕູ່ຫມູ່ ເອົາແກວມາເປັນຄົນຮັກແພງກັບຕົນເອງ. ອັນນີ້ ເປັນບັນຫາອັນພາໃຫ້ ຄົນລາວ ມ້ຽນຄາບຄົນລາວ.
- ຄົນລາວທີ່ຮ້ອງຜູ້ອື່ນວ່າເປັນແນວລາວ ບໍ່ຖືວ່າແນວລາວເປັນຄົນລາວເຫມືອນກັນ.
- ຢ້ານບໍ່ໄດ້ກັບເມືອຢາມບ້ານເມືອຢາມເມືອງລາວເລີຍບໍ່ກ້າເວົ້າຫຍັງ, ບາງຄັ້ງ ຮອດບໍ່ກ້າ ໄປປະກົດໂຕ. ນີ້ຄືບັນຫາ. ຂາດສະຕິຊາດ. ຂາດການເປັນຕົວຢ່າງແກ່ມວນຊົນ. ຂາດ ຄວາມຮັບຜິດຊອບ - ຫນ້າບໍ່ຄວນນັບຖື.
- ຫູເບົາໃຈງ່າຍ, ເຊື່ອງ່າຍພັງງ່າຍ ໃນຈໍານວນຜູ້ໃຫຍ່ແລະຜູ້ຮຽນສູງກໍເປັນຫລາຍ. ນີ້ຄື ບັນຫາ.
- ຜູ້ຮຽນສູງກໍມີຫລາຍ ແຕ່ບໍ່ຄ່ອຍສົນໃຈກັບເຣື່ອງງຽກບ້ານການເມືອງ. ລາງເທື່ອ ບໍ່ກ້າ ເວົ້າຄວາມຈິງ ກ່ຽວກັບ ເຣື່ອງບ້ານເກີດເມືອງນອນຂອງຕົນເອງ. (ລາງເທື່ອ ເວົ້າໄປແລ້ວ ກໍບໍ່ມີຫຍັງເກີດຂຶ້ນຫລືວ່າເດີຂຶ້ນຕື່ມ ເພາະວ່າຄວາມເຂົ້າໃຈຂອງມວນຊົນ ຫ່າງກັນໂພດ. ຈະໃຫ້ຖ້າຕື່ມອີກສາມສິບປີ ກະຢ້ານຕາຍຈາກໂລກກ່ອນ ບັສຈາກ ການເຮັດແນວໃດ ແນວນຶ່ງ ອັນເປັນປໂຍດເພື່ອປະເທດຊາດ, ເພື່ອມວນຊົນ ຄົນລາວເຫມືອນກັບຕົນ ນະບ້ານເກີດເມືອງນອນ ແຫ່ງຕົນ).
- ຄົນທີ່ມີຄວາມເຂົ້າໃຈດີ ແລະ ຄວາມສາມາດ ວິເຄາະວິໄຈ ບັນຫາໄດ້ ມີຫນ້ອຍ. (ແຕ່

ຜູ້ເຮັດໄດ້ບໍ່ຄ່ອຍສົນໃຈ, ເລີຍຂາດການຮ່ວມມື).

- ແກວເຂົ້າຢູ່ໃນຄນະຣັຖບານລາວແລະປະຈຳການຢູ່ເມືອງລາວ, ຜູ້ເປັນລາວ ຖືກແຕ່ງຕັ້ງເປັນທູດ ເພື່ອອອກໄປປະຈຳການຢູ່ຕ່າງປະເທດ.

ເວົ້າບໍ່ສິ້ນສຸດ, ມັນມີຫລາຍເກີນໄປ. ແມ່ນນິໄສໃຈຄໍ ຂອງຄົນລາວອັນນີ້ເອງ ກາຍເປັນວັດຖຸ ເພື່ອໄປຣະບາຍໃຈຂອງບາງຄົນ ແລະ ກາຍເປັນວັດຖຸ ທີ່ໄປທຳຮາຍ ນ້ຳຈິດນ້ຳໃຈຜູ້ມີສັດທາ, ທຳຮາຍຫລາຍສິ່ງຫລາຍຢ່າງທີ່ເຮົາໄດ້ມາແລ້ວ ໃຫ້ສາບສູນໄປ.

ໃນທີ່ນີ້ແມ່ນກ່າວເຖິງບັນຫາ. ບໍ່ຫມາຍຄວາມວ່າ ຄວາມດີແລະຄວາມເຂັ້ມແຂງ ຂອງຄົນລາວບໍ່ມີ. ບາງຄັ້ງ ຄວາມເຂັ້ມແຂງກັບຄວາມອ່ອນແອ ເປັນອັນດຽວກັນ. ຖ້າເຮົາເຂົ້າໃຈບັນຫາ ຫຼືວ່າ ຮັບຮູ້ວ່າບັນຫາມີແທ້ຫລືອາດຈະເກີດຂຶ້ນແທ້, ເຮົາກໍມີສະຕິ ຣະວັງໂຕ ໃນການປົກປ້ອງຮັກສາ ຜົນປໂຍດ ສ່ວນຕົວ ແລະ ສ່ວນຮວມ.

## ໔໐- ອະນາຄົດ

ອິນດູຈີນຝຣັ່ງຫ້າປະເທດໃນສໄມຝຣັ່ງປົກຄອງມີ ລາວ, ຂເມນ, ຕົງແກັງ, ອານາມ ແລະ ໂກແຊັງຊິນ. ປະເທດ Cochinchine ເປັນຫົວເມືອງ ຂອງຂເມນ ເຫມືອນກັນກັບພາກອີສານ ຂອງປະເທດໄທ ໃນປັດຈຸບັນ ເປັນຂອງລາວ, ໃນສໄມນັ້ນ.

ຂັ້ນເບື້ອງຕົ້ນ ໄດ້ມີຊາວວຽດນາມ (ຊາວອານາມ) ນັບມື້ນັບຫລາຍ ໃນການຫຼັບຍ້າຍລົງມາຕັ້ງຖິ່ນຖານ ໃນດິນແດນແຫ່ງນີ້. ເຈົ້າຫມຸນຂຸນນາງ ໄດ້ແຕ່ງງານກັບຍິງວຽດນາມ ທີ່ ມີຜິວຫນັງ ຂາວເຫລືອງ ແລະ ງາມກວ່າຍິງທີ່ເປັນເພື່ອນຮ່ວມ ຊາດຂອງຕົນ. ເກີດມີຊາວ ວຽດນາມ ທີ່ມາຕັ້ງຖິ່ນຖານ ໃນປະເທດນີ້ ເພີ້ມຈຳນວນ ຫລາຍຂຶ້ນ ແລະ ບາງຄົນຍັງໄດ້ ສັງກັດເຂົ້າຢູ່ໃນຣັຖບານອີກດ້ວຍ. ຕໍ່ມາບໍ່ພໍເທົ່າໃດ ຊາວວຽດນາມກໍປະກາດຍຶດເອົາ Cochinchine ເປັນປະເທດຂອງ ຊາວວຽດນາມທີ່ຕັ້ງຖິ່ນຖານຢູ່ດິນແດນແຫ່ງນັ້ນແລະກໍທຳສົງຄາມກັບຊາວ Cochinchine (ຂເມນ). ໃນຣະຍະນັ້ນ ໄດ້ມີ ຝຣັ່ງ ເຂົ້າມາຍຶດ ເອົາເປັນຫົວເມືອງຂຶ້ນ (໑໘໕໐?). ຈຸດຫມາຍ ຂອງ ຝຣັ່ງ ໃນສມັຍນັ້ນ ແມ່ນ ການເຜີຍແຜ່ le christianisme ເທົ່ານັ້ນເອງ. ໃນເມື່ອ ຄຸນພໍ່ ກາໂຕຫລິກ ເຫັນວ່າ ຊາວວຽດນາມ ເຂົ້າເປັນຄຣິສຕຽນຫລາຍຂຶ້ນ, ຄຸນພໍ່ກາໂຕຫລິກຝຣັ່ງ ຈິ່ງເອົາຄົນວຽດຜູ້ທີ່ເປັນຄຣິສຕຽນເປັນນາຍ.

ເມື່ອເຖິງປີ ໑໙໔໙(?) ຝຣັ່ງ ພ້ອມດ້ວຍຊາວວຽດນາມ ຄຣິສຕຽນ/ກາໂຕຫລິກ ໄດ້ປະກາດ ຍຶກເອົາ Cochinchine ອອກຈາກ ຂເມນ ເພື່ອເຂົ້າໄປປະກອບເປັນ ປະເທດ ວຽດນາມ.

ສໍາລັບຂ້າພຣະເຈົ້າ (ຂພຈ) ປະເທດ ລາວ ຕົກຢູ່ໃນກໍຣະນີ ຄ້າຍຄືກັນກັບ Cochinchine ແລ້ວ, ຫມາຍຄວາມວ່າ ຕົກເປັນຂອງວຽດນາມ ແລ້ວ. ມີແຕ່ວ່າ ເຂົາຈະກົນກິນ ລາວ ໄວ ຫລື ຊ້າ ເທົ່ານັ້ນເອງ, ບໍ່ຕ່າງຫຍັງກັບ ເຈົ້າຊີວິດ ສຣີສວ່າງ ວັທນາ ເຊັນໃບລາອອກ ຈາກ ຕໍາແຫນ່ງພຣະມະຫາກະສັດ ແລະຄູ່ມື້ນີ້ ຣັຖບານລາວ ກ່າວວ່າ ຖືກຕ້ອງຕາມກົດຫມາຍ ແລະບໍ່ມີການບັງຄັບໃດໆທັງສິ້ນ ໂດຍຖືເອົາສານໃບລາອອກ ເປັນຫລັກ. ຄົນແກວແລະ ພວກລູກຊອດແກວ ທີ່ສັງກັດຢູ່ໃນຄນະຣັຖບານລາວຄູ່ມື້ນີ້ ກໍຈະກ່າວແບບຄ້າຍຄືກັນ ໃນ ອະນາຄົດ ບໍ່ນານ. ຄົນລາວ ທຸກມື້ນີ້, ຈະຢູ່ໃນຫລືນອກປະເທດ, ຖືກຕັດເປັນກຸ່ມ ເປັນ ກອງ ນ້ອຍໆ ເພື່ອບໍ່ໃຫ້ "ຄົນລາວ" ມີໂອກາດ ຖືກຕ້ອງປອງດອງກັນໄດ້.

ຕົ້ນປີ ຄ.ສ. ໒໐໐໓, ຕາມການສັງເກດຂອງ ethnologue ນັກຄົ້ນຄວ້າ ດ້ານຊົນເຜົ່າ ບາງຄົນ ທີ່ໄດ້ໄປ ສຶກສາ ຕາມຊາຍແດນລາວກັບວຽດນາມແລະຕາມສາຍທາງ ໂຮ້ຈິມິນ, ເລີ້ມແຕ່ວຽດນາມພາກໃຕ້ ເຂົ້າໄປສູ່ລາວພາກກາງ (ເມືອງພິນ), ໄດ້ກ່າວວ່າ ມີ ຄົນແກວ ເຂົ້າມາຕັ້ງຖິ່ນຖານໃນລາວ ຫລາຍທີ່ສຸດ ແລະບໍ່ຮູ້ວ່າ ຄົນລາວຈະແກ້ໄຂບັນຫານີ້ໄດ້ ດ້ວຍ ວິທີໃດ.

ສໍາລັບຄົນລາວຕ່າງປະເທດ ຫລືຄົນລາວທີ່ຢູ່ເມືອງນອກ, ອະນາຄົດຂອງພວກທີ່ມີ ອາຍຸສີ່ຫາຫ້າສິບປີ ໃນປີ ໑໙໗໕ ໄດ້ສິ້ນຄວາມຫມາຍລົງແລ້ວ. ຄົນລາວ ທີ່ມີ ອາຍຸ ຣະຫວ່າງ ໓໐ ແລະ ໔໐ ປີໃນປັດຈຸບັນ ທີ່ຍັງມີຄວາມຮູ້ສຶກ ໃນຄວາມເປັນລາວ ແລະ ຍັງ ສົນໃຈໃນໂຊກຊາຕາບ້ານເມືອງຂອງລາວຈະແນມເຖິງອະນາຄົດຂອງເຂົາເຈົ້າ ທີ່ເມືອງລາວ ເປັນໄປໄດ້ຍາກ. ສໍາລັບຜູ້ມີອາຍຸຕໍ່າກວ່າ ໓໐ ປີ ຈະເປັນແນວໃດ ?

ລາວ ສາມັກຄີລາວໄດ້. ບັນຫາຊົນເຜົ່າມົ້ງ (ຊົນເຜົ່າ/ethnie ບໍ່ແມ່ນ peuple), ບັນຫາ ຄົນວຽດ ແລະ ຄົນຈີນ ທີ່ເຂົ້າມາຊ່ອນລີ້ ຫລືເຂົ້າມາຕັ້ງຖິ່ນຖານໃນລາວ ກໍຈະແກ້ໄຂບັນຫາ ນີ້ໄດ້ຍາກ. ຕາມໂບດ ຄຣິສຕຽນ ຫລືໂບດ ກາໂຕຫລິກ ກໍເຕັມໄປດ້ວຍແຕ່ ຄົນວຽດນາມ ເຂົ້າເມືອງເຖື່ອນ (clandestins) ແລະອື່ນໆ.

ອະນາຄົດ ຂອງ ລູກລາວຫລານລາວ ໃນເມືອງລາວປັດຈຸບັນແລະພາຍຫນ້າ ຈະມີຫລາຍຫລືຫນ້ອຍເທົ່າໃດ ໃຫ້ທ່ານຄິດເອົາເອງ. ຄົນລາວຫາຍໄປໃສຫມົດ ຈິ່ງເອົາຄົນວຽດນາມ ເຂົ້າມາສັງກັດຢູ່ຮ່ວມ ຣັຖກອນ ລາວ (ຂ້າຣາຊການ ໃນຖັນແຖວ ຣັຖບານ) ນັບມື້ນັບຫລາຍຂຶ້ນ ?

## ໕໐- ເງື່ອນໄຂ

ຫຼີກລ້ຽງການເວົ້າໃສ່ກັນອັນທີ່ຈະພາໃຫ້ນ້ອຍໃຈ ຫລືອັນທີ່ຈະພາໃຫ້ ເຫັນຫ່າງຈາກກັນ ຣະຫວ່າງຄົນລາວ ຜູ້ທີ່ມີນ້ຳໃຈເປັນລາວ, ຜູ້ຮັກລາວແລະຜູ້ທີ່ເປັນລາວແທ້ ເຫມືອນກັນກັບທ່ານ. ທັງນີ້ ເພື່ອຊອກສແວງຫາສ້າງຄວາມຮັກແພງຣະຫວ່າງລາວເສັຽກ່ອນ. ຜິວ່າຄົນລາວ ຂາດ ຄວາມນັບຖື ຂັ້ນປະຖົມ ອັນນີ້ແລ້ວ ຣະຫວ່າງລາວດ້ວຍກັນ, ຈະຫາເອົາງານປະເສີດອັນໃດ ມາເຮັດຮ່ວມກັນ ກໍອາດຈະສຳເຣັດຮູບຂຶ້ນໄດ້ຍາກ. ຂພຈ ຮຽກປະຕິກິຣິຍາອັນນີ້ວ່າ ສ້າງຄວາມຮັກແພງ ເພື່ອໃຫ້ຄວາມນັບຖືມີຫລາຍຂຶ້ນໄປເທື່ອລະກ້າວ(ກວ່າເກົ່າ) ຣະຫວ່າງລາວ, ໃນສະພາບປັດຈຸບັນ ອັນທີ່ລາວລຸ່ມທຸກກຸ່ມ ຂາດຄວາມສາມັກຄີ.

ລາວໃຫ້ກຽດແກ່ລາວ (ໃຫ້ ຄວາມນັບຖື). ທ່ານຜູ້ອ່ານໃຫ້ກຽດ ຂພຈ ; ທ່ານ ຜູ້ອ່ານເຊີນ ຂພຈ ເຂົ້າຮ່ວມງານ ທີ່ທ່ານຈະຈັດຂຶ້ນ ໃນມໍ່ໆຂ້າງຫນ້າ. ຜິວ່າ ຂພຈ ມາຮ່ວມງານນຳທ່ານໄດ້, ຂພຈ ເຂົ້າມາໃນສະຖານທີ່ຮ່ວມນັ້ນກໍຍ້ອນຄວາມນັບຖືກັນ ແລະເພື່ອເປັນການໃຫ້ກຽດຊຶ່ງກັນແລະກັນ ຫລືບໍ່ສະນັ້ນ ກໍມາຍ້ອນຄວາມຮັກແພງ (ເປັນພຽງອັນນຶ່ງພາຍໃນຕົວຢ່າງຫລາຍໆອັນ). ໂບຣານກ່າວວ່າ "ຊື້ກະບໍ່ຂາຍ ໃຫ້ກະບໍ່ເອົາ". ຄວາມຮັກແພງມີ, ຄວາມສາມັກຄີຄົງມີບໍ່ຫລາຍກໍຫນ້ອຍ. ບັນຍາກາດ ແລະການອຳນວຍຄວາມສະດວກ ກໍດີຂຶ້ນຕື່ມ ໃນການແລກປ່ຽນຄວາມຄິດເຫັນ ເພື່ອຊອກຫາ ຄວາມເຂົ້າໃຈ.

ເງື່ອນໄຂ ຂ້າງເທິງນີ້, ທຸກໆທ່ານປະຕິບັດໄດ້ ເພາະມັນເປັນການສະແດງເຖິງກິຣິຍາມາຣະຍາດແລະຄຸນສົມບັດສ່ວນຕົວຂອງແຕ່ລະຄົນ. ສ່ວນເງື່ອນໄຂອື່ນໆນັ້ນ, ເຮົາຈະມາໃຊ້ມາດຕຣາການໃສ່ກັນ ກໍເປັນໄປໄດ້ຍາກ ຖ້າເຮົາບໍ່ນັບຖືຫລັກການປາກເວົ້າອັນເປັນປະຖົມເງື່ອນໄຂນີ້ເສັຽກ່ອນ.

## ៥០- ວິທີການ

ຈະກ່າວເຖິງພຽງ ວິທີການ ອັນບໍ່ເກີນຄວາມສາມາດ ຫລາຍກວ່າ.

- ສົ່ງເສີມຊາວຫນຸ່ມລາວ ໃຫ້ເຂົ້າສັງກັດຢູ່ໃນການຈັດຕັ້ງຕ່າງໆ ສລັບສັບຊ້ອນກັບ ຜູ້ມີອາຍຸສູງ.
- ສົ່ງເສີມລູກເຕົ້າ ໃຫ້ມີການສຶກສາສູງ, ໃຫ້ໄປໄກເທົ່າທີ່ຈະໄກໄດ້ (ຈະເປັນດ້ານ ກົດ-ຫມາຍ ກໍດີ).
- ຈັດ colloque ສອງປີເທື່ອນຶ່ງຢ່າງນ້ອຍ.
- ເຮັດ bilan ອັນແທ້ຈິງ ດ້ານຄວາມສາມາດ ແລະ ດ້ານອື່ນໆ (Analyse des besoins et des problèmes rencontrés et puis des souhaits en fonction des moyens et ressources existants).
- ສົ່ງເສີມພວກຄົນລາວ ທີ່ຢາກກັບຄືນເມືອບ້ານ ໃຫ້ມີຄວາມສາມາດໄປສ້າງ intérêt ຂອງເຂົາເຈົ້າຂຶ້ນໃນປະເທດ. ພ້ອມດຽວກັນນັ້ນ ຍັງໃຫ້ເຂົາສາມາດ ຊ່ວຍສ້າງ intérêt ສ່ວນຕົວຂອງຄົນລາວໃນທ້ອງຖິ່ນທາງດ້ານເສຖກິດ. ຖ້າເຂົາມີ intérêt ສ່ວນຕົວ, ການປ້ອງກັນ intérêt ຂອງເຂົາ ສາມາດເກີດຂຶ້ນໄດ້. intérêt ດັ່ງກ່າວຂອງເຂົາ ກໍຄືຈຸດປະສົງຂອງເຮົາ, ລາວລຸ່ມ ທຸກຄົນ.
- ພຍາຍາມໃຫ້ມີການປະສານງານ ຣະຫວ່າງ ລາວທຸກຝ່າຍ ແລະພຍາຍາມສ້າງ ຄວາມຮັກແພງຂຶ້ນ ຣະຫວ່າງລາວ ເສັຽກ່ອນ, ຈະເປັນລາວແດງ ຫລື ລາວຂາວ, ຖ້າໂອກາດອຳນວຍໃຫ້. ຢ່າລືມວ່າ ເຮົາຂາດກຳລັງ, ຈະເປັນດ້ານ ທະຫານ, ດ້ານຈຳນວນຄົນ, ດ້ານມັນສມອງ ຫລື ດ້ານເງິນ ແລະ ດ້ານອື່ນໆກໍເຫມືອນກັນ.
- ຊອກຫາເປົ້າຫມາຍອັນສຳຄັນໆ ເພື່ອເຮັດໃຫ້/ເພື່ອສ້າງຄວາມເຂົ້າໃຈໃນມວນຊົນ ຄົນລາວລຸ່ມ ວ່າ ອັນຕະຣາຍທີ່ສາມາດດັບຊາດລາວໄດ້ ແມ່ນ ແກວ ພວກຍວນ. ຄວນເຮັດຄວນທຳ ຫລື ບໍ່ຄວນເຮັດບໍ່ຄວນທຳ ຢ່າງໃດ ຕໍ່ສະພາບ ການສຸກເສີນ ອັນນີ້, ອັນແນໃສ່ ເປົ້າຫມາຍ ເອກພາບ.

## ៦០- ການຮ່ວມມື

- ຮ່ວມມືກັນ ວິໄຈບັນຫາ ແລະ ຂໍ້ຂ້ອງໃຈຕ່າງໆ.
- ຊອກຫາໃຊ້ວິທີການດ້ານກົດຫມາຍ, ດ້ານ médias ແລະດ້ານການເມືອງ ເພື່ອໃຫ້ການກະທຳ ໄດ້ຫມາກໄດ້ຜົນ ດີກວ່າຈຸດຜ່ານໆມາ.

- ເຮັດແນວໃດແນວນຶ່ງເພື່ອດຶງດູດເອົານັກຂ່າວໃຫ້ຊຸມເຣື່ອງຄົນລາວລຸ່ມ ຫລາຍໆຂື້ນ.

ຈະເວົ້າເຖິງ ສິ່ງທີ່ ຢາກເຮັດຢາກທຳ ໂດຍບໍ່ມີການຄຳນວນເຖິງ ຄວາມສາມາດ ໃນຫລາຍໆດ້ານ ອັນເຮົາມີຢູ່ປັດຈຸບັນ ຍ່າງພ້ອມພຽງແບບຕຽມພ້ອມ ບໍ່ຫລາຍກໍຫນ້ອຍນັ້ນຈະເປັນການສ້າງຄວາມຫວັງ ເພື່ອເຮັດໃຫ້ຄົນລາວ ເສັຽສັດທາຫລາຍກວ່າ, ຈະໄດ້ຜົນດີ, ເຂົ້າສູ່ ຈິດໃຈຄົນລາວເຮົາເອງ.

## ສລຸບຄວາມ

ຈາກຜືນແຜ່ນດິນ ອັນກວ້າງຂວາງ ແຫ່ງຈັກກະພັດ ລ້ານຊ້າງ ກາຍມາເປັນປະເທດລູກແຫລ້ງຕົນມື ອັນນ້ອຍໆ ແຫ່ງ ຣາຊອານາຈັກລາວ ໃນອະດີດ ເມື່ອ ບໍ່ນານມານີ້ ຈົນຮອດ ສາທາຣະນະຣັດ ປະຊາທິປະໄຕ ປະຊາຊົນລາວ ໃນຍຸກປັດຈຸບັນກໍກາຍມາເປັນລູກແຫລ້ງຕົນມືຂອງວຽດນາມ ຂີ້ທຸກ.

ທີ່ຜ່ານມາຈົນເຖິງທຸກວັນນີ້ຄືອະດີດຄົນລາວໃນການບໍຣິຫານ ປະເທດ-ຊາດ ແບບໄຮ້ການສ້າງລາວໃຫ້ເປັນລາວ ເພື່ອ ຄວາມກ້າວຫນ້າ ຂອງຊົນໃນຊາດແລະຄວາມຫມັ້ນຄົງຂອງປະເທດ. ຂພຈ ບໍ່ເຫັນສິ່ງໃຫຍ່ໂຕມະໂຫຣານ ອັນສຳຄັນ ເຫລືອເປັນມູນປະໄວ້ໃຫ້ລາວພາຍສ້ອຍແມ້ແຕ່ພຽງຫນ້ອຍດຽວ ເປັນສັນຍາລັກ ເພື່ອສະແດງເຖິງຄວາມຊໍາລິກັນວ່າ "ຄົນລາວ-ຊາວລາວ ເຄີຍມີ ຄວາມຍິ່ງໃຫຍ່ ແລະ ຄວາມຈະເຣີນ ມາກ່ອນຫລາຍສັຕວັດ", ນອກຈາກຍິ່ງໃຫຍ່ໃນການຊອກຫາແຕ່ປະຫັດປະຫານ ຣະຫວ່າງລາວດ້ວຍກັນ ເພື່ອຍາດອຳນາດ ຍາດບັນລັງ ຍາດໂຕະ ຍາດຕັ່ງ. ໃນອະດີດກໍເຫມືອນໃນປັດຈຸບັນ, ຂພຈ ບໍ່ຢາກກ່າວເຖິງຊໍ້າວ່າ ຜູ້ນຳລາວ ຖະນຸຖນອມ ຄວາມເປັນລາວ ແລະ ສົ່ງເສີມ ຄວາມຖືກຕ້ອງປອງດອງ ຣະຫວ່າງລາວດ້ວຍກັນ ເພື່ອ ຜົນປໂຍດສ່ວນຣວມ ຂອງຄົນລາວທັງຫມົດທັງປວງ ຈາກ ທຸກທົ່ນທຸກແຫ່ງ.

ຄົງເປັນ ບົ້ນຈົບ ບົ້ນປາຍ ແຫ່ງຄວາມເປັນລາວ-ແຫ່ງຄວາມເປັນປະເທດ ແລະເປັນຊາດ, ຖ້າເຮົາຂາດການຮ່ວມມືກັນແກ້ໄຂ ບັນຫາລາວພາຍໃນສິບປີ ຂ້າງຫນ້າ ເພື່ອໃຫ້ ລາວສາມັກຄີລາວ - ລາວປົກຄອງລາວ ໂດຍການຮ່ວມມືກັນສ້າງສາ ພັທນາ ປະເທດອັນຍອມຮັບຍົກໂທດແກ່ລາວ ທຸກກໍ້າຝ່າຍ ໃນປັດຈຸບັນ ແລະ ໃນອະນາຄົດ.

ພາຍໃນ ໑໐ ປີ, ໖໐ ປີ ຫາ ໕໐ ປີ:

- ຄວາມຮູ້ສຶກຂອງລາວລຸ່ມນອກປະເທດຈະເປັນແນວໃດ?
- ຄົນລາວລຸ່ມ ໃນປະເທດຈະມີ ຫລາຍຫລືຫນ້ອຍ ແລະມີການສຶກສາແບບໃດ?
- ຊາວວຽດນາມຢູ່ໃນລາວ ຈະມີຫຼາຍກວ່າຊາວລາວລຸ່ມ ບານໃດ?
- ຄວາມຫວັງຂອງແມ້ວກ່ຽວກັບລາວ ຈະຄືບຫນ້າແບບໃດ?
- ຯລຯ.